ກະຊວງວິທະຍາສາດແລະເຕັກໂນໂລຊີ
ເລກທີ: 0006 ...ກວດ
ລົງວັນທີ 01 JAN 2014
ເວລາ --1429
ສົ່ງເຖິງ..........

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 364 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 27 ທັນວາ 2013

# ດຳລັດ
# ວ່າດ້ວຍການໂອນ, ແຍກ ແລະ ສ້າງຕັ້ງເມືອງໃໝ່ ທີ່ຂຶ້ນກັບແຂວງໄຊສົມບູນ

- ອີງຕາມ ມາດຕາ 7 ໝວດ II ຂອງກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ;
- ອີງຕາມ ມາດຕາ 25 ໝວດ II ຂອງກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການສ້າງຕັ້ງແຂວງໄຊສົມບູນ ສະບັບເລກທີ 012/ສພຊ, ລົງວັນທີ 13 ທັນວາ 2013;
- ອີງຕາມໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ /ພນ, ລົງວັນທີ ທັນວາ 2013

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1** ເຫັນດີໂອນເມືອງຮົ່ມ ແລະ ເມືອງໄຊສົມບູນ ກຸ່ມບ້ານເມືອງພູນ ແລະ ກຸ່ມບ້ານໂພນພະ ຈາກແຂວງວຽງຈັນ ໃຫ້ຂຶ້ນກັບແຂວງໄຊສົມບູນ.

**ມາດຕາ 2** ເຫັນດີໃຫ້ແຍກ ແລະ ປ່ຽນຊື່ເມືອງໄຊສົມບູນ ອອກເປັນ 2 ເມືອງຄື: ເມືອງອະນຸວົງ ແລະ ເມືອງລ້ອງແຈ້ງ, ໃນນັ້ນ:

- ເມືອງອະນຸວົງ ມີເນື້ອທີ່ທັງໝົດ 2.160 ກິໂລຕາແມັດ, ລວມທັງກຸ່ມບ້ານໂພນພະ ມີພົນລະເມືອງທັງໝົດ 22.024 ຄົນ.
- ເມືອງລ້ອງແຈ້ງ ມີເນື້ອທີ່ທັງໝົດ 1.772 ກິໂລຕາແມັດ, ລວມທັງກຸ່ມບ້ານເມືອງພູນ ມີພົນລະເມືອງທັງໝົດ 8.224 ຄົນ.

**ມາດຕາ 3** ເຫັນດີໃຫ້ແຍກເມືອງຮົ່ມ ອອກເປັນ 2 ເມືອງຄື: ເມືອງຮົ່ມ ແລະ ເມືອງລ້ອງຊານ ຂຶ້ນກັບແຂວງໄຊສົມບູນ, ໃນນັ້ນ:

- ເມືອງຮົ່ມ ມີເນື້ອທີ່ທັງໝົດ 1.633 ກິໂລຕາແມັດ, ມີພົນລະເມືອງທັງໝົດ 10.521 ຄົນ.
- ເມືອງລ້ອງຊານ ມີເນື້ອທີ່ທັງໝົດ 1.379 ກິໂລຕາແມັດ, ມີພົນລະເມືອງທັງໝົດ 23.457 ຄົນ.

ມາດຕາ 4 ມອບໃຫ້ອົງການປົກຄອງແຂວງໄຊສົມບູນ ແລະ ແຂວງວຽງຈັນ ສົມທົບກັນຈັດຕັ້ງປະຕິບັດ ໃຫ້ສອດຄ່ອງກັບທີ່ຕັ້ງ ແລະ ຈຸດພິເສດຂອງເມືອງດັ່ງກ່າວ.

ມາດຕາ 5 ຄະນະຈັດຕັ້ງສູນກາງພັກ, ຫ້ອງວ່າການລັດຖະບານ, ບັນດາກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ໃຫ້ມີປະສິດທິຜົນ.

ມາດຕາ 6 ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ